# ພຣະຄຳພີ

## ພຣະຄຳ ໂອບາດີຢາ

ສະບັບ 2010

Lao Bible Online — http://laobible.net/

# ໂອບາດີຢາ

## ຄວາມຈິບຫາຍຈະມາເຖິງເມືອງເອໂດມ

1ນິມິດຂອງ ໂອບາດີຢາ ອົງພຣະຜູ້ເປັນເຈົ້າ ພຣະເຈົ້າກ່າວເຖິງ ເອໂດມ ວ່າດັ່ງນີ້: "ເຮົາໄດ້
ຍິນຂ່າວຈາກພຣະຜູ້ເປັນເຈົ້າ ລາຊະທູດໄດ້ຖືກຮັບໃຊ້ໄປໃນທ່າມກາງພວກຕ່າງຊາດໃຫ້ເວົ້າວ່າ
"ຈົ່ງລຸກຂຶ້ນໄປເຮັດເສິກຕໍ່ສູ້ ເອໂດມ" 2ເບິ່ງແມ ເຮົາໄດ້ສ້າງໃຫ້ເຈົ້າເປັນພວກນ້ອຍໃນທ່າມກາງ
ພວກຕ່າງຊາດ ໃຫ້ເຈົ້າຖືກໝິ່ນປະໝາດຫລາຍ 3ຈິດໃຈຈອງຫອງຂອງພວກເຈົ້າໄດ້ຫລອກລວງ
ພວກເຈົ້າເອງ ເຈົ້າຜູ້ຊຶ່ງອາໄສຢູ່ບ່ອນທີ່ສູງໃນໂງ່ນຫີນ ເຈົ້າຄິດຢູ່ໃນໃຈວ່າ "ໃຜຈະດຶງຂ້ອຍລົງ-
ພື້ນດິນໄດ້?" 4ພຣະຜູ້ເປັນເຈົ້າຊົງກ່າວວ່າ "ຖ້າເຈົ້າບິນເອີ້ນຂຶ້ນໄປສູງເໝືອນນົກອິນຊີ ແລະຖ້າ
ເຈົ້າເຮັດຮັງຂອງເຈົ້າໄດ້ໃນທ່າມກາງບັນດາດວງດາວທັງຫລາຍ, ເຮົາຈະເອົາເຈົ້າລົງມາຈາກ
ບ່ອນນັ້ນ 5ຖ້າຂີ້ລັກເຂົ້າມາໃນເຮືອນຂອງເຈົ້າ, ຖ້າພວກປຸ້ນເຂົ້າມາໃນຕອນກາງຄືນ (ເຈົ້າຈະ
ຈິບຫາຍຫລາຍເທົ່າໃດນໍ) ພວກເຂົາຈະບໍ່ລັກເອົາສຳລັບຕົວຂອງພວກເຂົາເທົ່ານັ້ນບໍ? ຖ້າຄົນ
ເກັບໝາກອະງຸ່ນໃນສວນຂອງເຈົ້າ ລາວຈະບໍ່ປະໝາກອະງຸ່ນໃຫ້ເຫຼືອໄວ້ແດ່ບໍ? 6ເອຊາວ ໄດ້ຖືກ
ການຮ້າຍແຮງແລ້ວຢ່າງໃດນໍ! ຊັບສົມບັດທີ່ເຊື່ອງໄວ້ກໍຖືກປຸ້ນເອົາໄປໝົດ 7ຄົນທັງຫຼາຍທີ່ໄດ້
ສັນຍາກັບເຈົ້າກໍໄດ້ຊຸກເຈົ້າໄປເຖິງເຂດແດນ, ຄົນທັງຫຼາຍທີ່ເປັນມິດກັບເຈົ້າກໍໄດ້ຫລອກລວງ
ເຈົ້າ ພວກເຂົາຕໍ່ສູ້ ແລະໄດ້ຊະນະເຈົ້າແລ້ວ, ເພື່ອນມິດທັງຫຼາຍທີ່ໄດ້ກິນເຂົ້າຈີ່ຂອງເຈົ້າ ກໍເອົາ
ບ້ວງແຮ້ວມາຫ້າງດັກໄວ້ຢູ່ລຸ່ມຕົວເຈົ້າ ເລື່ອງນີ້ບໍ່ມີໃຜເຂົ້າໃຈເພິ່ນເລີຍ" 8ພຣະຜູ້ເປັນເຈົ້າກ່າວ
ວ່າ "ເຮົາຈະບໍ່ທຳລາຍຄົນສະຫລາດໃຫ້ໝົດໄປຈາກ ເອໂດມ ແລະທຳລາຍຄວາມ ເຂົ້າໃຈຈາກ
ພູເຂົາ ເອຊາວ ໃນມື້ນັ້ນບໍ?" 9ໂອ ເຕມານ ເອີຍ ຊາຍສະກັນຂອງເຈົ້າຈະຕົກໃຈ ເມື່ອທຸກຄົນທີ່
ມາຈາກພູເຂົາ ເອຊາວ ຈະຖືກຂ້າຕາຍ

## ຄວາມບາບຂອງເອໂດມຕໍ່ອິສຣາເອນ

10ຍ້ອນ ເຈົ້າໄດ້ ເຮັດທາລຸນ ແກ່ ຢາໂຄບ ນ້ອງຊາຍ ຂອງ ເຈົ້າ ຄວາມອັບອາຍ ຈະ ຄຸມ ເຈົ້າ ໄວ້
ແລະເຈົ້າຈະຕ້ອງຖືກຕັດຂາດອອກໄປເປັນນິດ 11ໃນມື້ທີ່ເຈົ້າຢືນເປັນສັດຕູ, ໃນຂະນະທີ່ຄົນຕ່າງ
ດ້າວເອົາຊັບສິນຂອງເມືອງໄປ ແລະຄົນຕ່າງຊາດເຂົ້າມາທາງປະຕູເມືອງ ພວກເຂົາຈັບສະ-
ຫລາກຢູ່ເທິງ ເມືອງ ເຢຣູຊາເລັມ ພວກເຈົ້າກໍໄດ້ເຮັດເໝືອນກັບຄົນເຫລົ່ານັ້ນ 12ແຕ່ເຈົ້າບໍ່ຄວນ
ຍິ້ມພໍໃຈທີ່ໄດ້ເບິ່ງມື້ນັ້ນ ຄືມື້ທີ່ນ້ອງຊາຍຂອງເຈົ້າໄດ້ຮັບເຄາະຮ້າຍ ແລະ ບໍ່ສົມຄວນທີ່ຈະປິຕິ-
ຍິນດີຍ້ອນລູກຫລານ ຢູດາ ໃນເມື່ອພວກເຂົາຖືກທຳລາຍໃຫ້ຈິບຫາຍ ເຈົ້າບໍ່ຄວນຈະເວົ້າໂອ້
ອວດໃນມື້ທີ່ພວກເຂົາຕົກທຸກໄດ້ຍາກ 13ເຈົ້າບໍ່ຄວນຜ່ານເຂົ້າປະຕູເມືອງແຫ່ງປະຊາຊົນຂອງເຮົາ
ໃນມື້ທີ່ພວກເຂົາຖືກທຳລາຍ ພວກເຈົ້າບໍ່ຄວນຢືນຍິ້ມເບິ່ງຄວາມທຸກຍາກຂອງພວກເຂົາໃນມື້ທີ່
ພວກເຂົາຖືກເຄາະຮ້າຍ ພວກເຈົ້າບໍ່ຄວນຍື່ນມືຈັບເອົາຊັບສິນຂອງພວກເຂົາໃນມື້ທີ່ພວກເຂົາຖືກ
ເຫດຮ້າຍອັນຕະລາຍ 14ເຈົ້າບໍ່ຄວນຢືນຢູ່ທາງແຍກຂອງພວກເຂົາ ເພື່ອຈະດັກຈັບພວກເຂົາທີ່
ຫລົບໜີ, ເຈົ້າບໍ່ຄວນມອບຜູ້ທີ່ລອດພົ້ນມາໄດ້ນັ້ນ ໃຫ້ແກ່ສັດຕູຂອງພວກເຂົາໃນມື້ທີ່ພວກເຂົາ

ຕົກທຸກໄດ້ຍາກ

## ການທຳລາຍເອໂດມປຽບເໝືອນກັບວັນຂອງພຣະຜູ້ເປັນເຈົ້າໃນອະນາຄົດ

[15]ເພາະວ່າວັນຂອງພຣະຜູ້ເປັນເຈົ້າສຳລັບພວກຕ່າງຊາດໄດ້ໃກ້ເຂົ້າມາແລ້ວ ຖ້າເຈົ້າຈະເຮັດ
ສິ່ງໃດແກ່ພວກເຂົາ ເຈົ້າກໍຈະຖືກການນັ້ນ ລາງວັນແຫ່ງການຕອບແທນຂອງເຈົ້າ ຈະກັບມາຕົກ
ໃສ່ເທິງຫົວຂອງເຈົ້າເອງ [16]ເຫດວ່າພວກເຈົ້າໄດ້ດື່ມຢູ່ເທິງພູເຂົາບໍລິສຸດຂອງເຮົາຢ່າງໃດ ພວກ
ຕ່າງຊາດທັງປວງກໍຈະດື່ມຢ່າງນັ້ນໂດຍບໍ່ຢຸດເຊົາ ຈະດື່ມສືບໆໄປ ພວກເຂົາຈະດື່ມ ແລະກືນ
ແລ້ວພວກເຂົາຈະເປັນເໝືອນກັບທີ່ບໍ່ເຄີຍເປັນມາກ່ອນ [17]ແລະຢູ່ເທິງພູເຂົາຊີໂອນຈະມີຄວາມ
ພົ້ນ ພູນັ້ນຈະບໍລິສຸດ ແລະຄອບຄົວຂອງຢາໂຄບຈະໄດ້ຮັບທີ່ດິນນັ້ນເປັນກຳມະສິດຂອງພວກ
ເຂົາ [18]ຄອບຄົວຂອງຢາໂຄບຈະເປັນໄຟ ຄອບຄົວຂອງໂຢເຊັບຈະເປັນແປວໄຟ ແລະຄອບຄົວ
ຂອງເອຊາວຈະເປັນຕໍເຟືອງ ພວກເຂົາຈະດັງໄຟຈູດຕໍເຟືອງນັ້ນ ບໍ່ມີສິ່ງໃດຍັງເຫຼືອຢູ່ໃນຄອບ-
ຄົວຂອງເອຊາວ ເພາະວ່າພຣະຜູ້ເປັນເຈົ້າໄດ້ບອກໄວ້ກ່ອນແລ້ວ [19]ຄົນທັງຫລາຍທີ່ຢູ່ໃນພາກ
ໃຕ້ຈະໄດ້ພູເຂົາຂອງເອຊາວເປັນກຳມະສິດ ຄົນເຫລົ່ານັ້ນທີ່ຢູ່ໃນທົ່ງພຽງ ຈະໄດ້ແຜ່ນດິນຟີລິດ-
ສະຕິນ ພວກເຂົາຈະໄດ້ແຜ່ນດິນເອຟຣາຢິມ ແລະແຜ່ນດິນຊາມາເຣຍເປັນກຳມະສິດ ແລະ
ເບັນຢາມິນຈະໄດ້ກີເລອາດເປັນກຳມະສິດ [20]ຜູ້ທີ່ຖືກກວາດໄປຈາກກອງທັບລູກຫຼານຂອງອິ-
ສຣາເອນທີ່ເປັນຊະເລີຍ ຈະໄດ້ແຜ່ນດິນຊຶ່ງເປັນຂອງຄົນການາອານໄກໄປຈົນຮອດຊາເຣຟັດ
ເປັນກຳມະສິດ, ສ່ວນພວກຊະເລີຍຊາວເຢຣູຊາເລັມທີ່ຢູ່ໃນເສຟາຣາດ ຈະໄດ້ຫົວເມືອງໃນ
ພາກໃຕ້ເປັນກຳມະສິດ [21]ແລະພວກຜູ້ຊ່ວຍທັງຫລາຍຈະຂຶ້ນໄປເທິງພູເຂົາຊີໂອນເພື່ອຕັດສິນພູ-
ເຂົາຂອງເອຊາວ ແລະລາຊະອານາຈັກນັ້ນຈະເປັນຂອງພຣະຜູ້ເປັນເຈົ້າ

# ຕົວຫຍໍ້

| ຊື່ພຣະທຳ | ຕົວຫຍໍ້ | ຊື່ພຣະທຳ | ຕົວຫຍໍ້ |
|---|---|---|---|
| ປະຖົມມະການ | ປຖກ | ປັນຍາຈານ | ປຍຈ |
| ອົບພະຍົບ | ອພຍ | ຍອດເພງ | ຍດພ |
| ລະບຽບພວກເລວີ | ລລວ | ເອຊາຢາ | ອຊຢ |
| ຈົດເຊັນບັນຊີ | ຈຊບ | ເຢເຣມີຢາ | ພຄຄ |
| ພຣະບັນຍັດສອງ | ພບຍ | ເພງຄ່ຳຄວນ | ຢຣມ |
| ໂຢຊວຍ | ຢຊຍ | ເອເຊກີເອນ | ອສກ |
| ພວກຜູ້ປົກຄອງ | ຜປຄ | ດານີເອນ | ດນອ |
| ນາງຣຸດ | ນຣດ | ໂຮເຊອາ | ຮຊອ |
| 1 ຊາມູເອນ | 1ຊມອ | ໂຢເອນ | ຢອນ |
| 2 ຊາມູເອນ | 2ຊມອ | ອາໂມດ | ອມດ |
| 1 ກະສັດ | 1ກສດ | ໂອບາດີຢາ | ອບດ |
| 2 ກະສັດ | 2ກສດ | ໂຢນາ | ໂຢນ |
| 1 ຂ່າວຄາວ | 1ຂຄວ | ມີກາ | ມກາ |
| 2 ຂ່າວຄາວ | 2ຂຄວ | ນາຮູມ | ນຮມ |
| ເອັດຊະຣາ | ອສຣ | ຮາບາກຸກ | ຮບກ |
| ເນເຮມີຢາ | ນຮຢ | ເຊຟານີຢາ | ສຟຢ |
| ເອສະເທີ | ອຊທ | ຮັກກາຍ | ຮກຍ |
| ໂຢບ | ໂຢບ | ເສກາລີຢາ | ສກຢ |
| ເພງສັນລະເສີນ | ພສສ | ມາລາກີ | ມລກ |
| ສຸພາສິດ | ສພສ | | |

This 2010 edition of the Lao Bible has been revised and extended from the 1979 edition of the Lao Shorter Old Testament and 1973 edition of the Lao New Testament, as published by Thailand Bible Society in 1991.

Lao Bible Online – http://www.laobible.net.